ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສຳນັກງານນາຍົກລັດຖະມົນຕີ ເລກທີ 135 /ນຍ

ນະຄອນຫລວງວຽງຈັນ, ວັນທີ 25.05.2009

# ດຳລັດ
# ວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫລື ສຳປະທານ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003 ;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການຄຸ້ມຄອງທີ່ດິນແຫ່ງຊາດ ສະບັບເລກທີ 810/ອຄດຊ, ລົງວັນທີ 23 ກໍລະກົດ 2008.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ :

## ພາກທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບການເອົາທີ່ດິນຂອງລັດໃຫ້ເຊົ່າ ຫລື ສຳປະທານ ແນໃສ່ເພື່ອຮັບປະກັນການຄຸ້ມຄອງ ແລະ ນຳໃຊ້ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ເຮັດໃຫ້ທີ່ດິນຂອງລັດໄດ້ຮັບການພັດທະນາ, ຫັນທີ່ດິນເປັນທຶນ ທັງເປັນການສົ່ງເສີມການລົງທຶນເຂົ້າໃນການຜະລິດເປັນສິນຄ້າ, ການບໍລິການ ແລະ ການສ້າງແຫລ່ງລາຍຮັບເຂົ້າງົບປະມານແຫ່ງລັດ.

ມາດຕາ 2. ນິຍາມ

**- ການເຊົ່າທີ່ດິນ** ແມ່ນການອະນຸຍາດໃຫ້ການຈັດຕັ້ງ, ບຸກຄົນ ຫລື ນິຕິບຸກຄົນ ມີສິດໃຊ້ທີ່ດິນຂອງລັດຕາມເງື່ອນໄຂ ແລະ ກຳນົດເວລາໂດຍມີຂໍ້ຜູກພັນສັນຍາຢ່າງຖືກຕ້ອງ ຕາມລະບຽບກົດໝາຍ.

**- ການສຳປະທານທີ່ດິນ** ແມ່ນການອະນຸຍາດໃຫ້ບຸກຄົນ ຫລື ນິຕິບຸກຄົນ ເພື່ອດຳເນີນກິດຈະການ ໂດຍການມີສິດໃຊ້ທີ່ດິນຂອງລັດເຂົ້າໃນກິດຈະການອັນໃດອັນໜຶ່ງໄດ້ ຕາມເງື່ອນໄຂ ແລະ ກຳນົດເວລາ ໂດຍມີຂໍ້ຜູກພັນສັນຍາຢ່າງຖືກຕ້ອງຕາມລະບຽບກົດໝາຍ.

ມາດຕາ 3. **ເປົ້າໝາຍທີ່ດິນຂອງລັດໃຫ້ເຊົ່າ ຫລື ສຳປະທານ.**

ເປົ້າໝາຍທີ່ດິນຂອງລັດໃຫ້ເຊົ່າ ຫລື ສຳປະທານ ແມ່ນດຳເນີນໃນເຂດພື້ນທີ່ດິນຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 5 ແລະ 6 ຂອງດຳລັດສະບັບນີ້.

ມາດຕາ 4. **ຜູ້ມີສິດເຊົ່າ ຫລື ສຳປະທານທີ່ດິນຂອງລັດ**

ຜູ້ມີສິດເຊົ່າທີ່ດິນຂອງລັດ ແມ່ນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ອົງການຈັດຕັ້ງ, ທຸກພາກສ່ວນເສດຖະກິດຂອງລັດ, ລວມໝູ່ ແລະ ບຸກຄົນ, ສະຖານທູດ ຫລື ອົງການຈັດຕັ້ງສາກົນ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ. ຜູ້ເຊົ່າຕ້ອງເສັຍຄ່າເຊົ່າທີ່ດິນ ຕາມອັດຕາທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ຜູ້ມີສິດສຳປະທານທີ່ດິນຂອງລັດ ແມ່ນນິຕິບຸກຄົນເອກະຊົນທັງພາຍໃນ ແລະ ຕ່າງປະເທດ. ຜູ້ສຳປະທານ ຕ້ອງເສັຍຄ່າສຳປະທານທີ່ດິນ, ຄ່າຊັບພະຍາກອນທຳມະຊາດ, ອາກອນ, ພາສີ ແລະ ຄ່າທຳນຽມຕາມທີ່ລະບຽບກົດໝາຍກຳນົດໄວ້.

ມາດຕາ 5. **ການແບ່ງເຂດ, ປະເພດທີ່ດິນຂອງລັດ**

ການແບ່ງເຂດ ແລະ ປະເພດທີ່ດິນຂອງລັດທີ່ໃຫ້ເຊົ່າ ແລະ ສຳປະທານ ແມ່ນອີງໃສ່ທີ່ຕັ້ງທາງດ້ານພູມສາດ, ສະພາບເສດຖະກິດ - ສັງຄົມຂອງແຕ່ລະເຂດ ແລະ ອີງໃສ່ນະໂຍບາຍສົ່ງເສີມຂອງລັດຕາມຂະແໜງການ ຊຶ່ງແບ່ງອອກເປັນ ສາມ ເຂດ ຄື:

ເຂດ 1: ເຂດພູດອຍ, ພູພຽງ, ທົ່ງພຽງ, ທີ່ບໍ່ມີພື້ນຖານໂຄງລ່າງເສດຖະກິດ ທີ່ອຳນວຍແກ່ການລົງທຶນ.

ເຂດ 2: ເຂດພູດອຍ, ພູພຽງ, ທົ່ງພຽງ ທີ່ມີພື້ນຖານໂຄງລ່າງເສດຖະກິດ ສາມາດຮອງຮັບການລົງທຶນໄດ້ສ່ວນໃດສ່ວນໜຶ່ງແລ້ວ.

ເຂດ 3: ເຂດພູດອຍ, ພູພຽງ, ທົ່ງພຽງ ທີ່ມີພື້ນຖານໂຄງລ່າງຮອງຮັບການລົງທຶນໄດ້ດີແລ້ວ.

**ມາດຕາ 6. ຫລັກການລວມໃນການເອົາທີ່ດິນຂອງລັດໃຫ້ເຊົ່າ ຫລື ສຳປະທານ**

ການກຳນົດເນື້ອທີ່ເຂດໃຫ້ເຊົ່າ ຫລື ສຳປະທານທີ່ດິນປຸກສ້າງ, ທີ່ດິນກະສິກຳ, ທີ່ດິນປ່າໄມ້, ທີ່ດິນບໍລິເວນນ້ຳ, ທີ່ດິນອຸດສາຫະກຳ, ທີ່ດິນວັດທະນະທຳ ແລະ ທີ່ດິນຄົມມະນາຄົມ ຕ້ອງໄດ້ສຳຫລວດຈັດສັນ, ສ້າງແຜນທີ່ດິນ ແລະ ວາງແຜນການນຳໃຊ້ທີ່ດິນຕາມການແບ່ງເຂດ ແລະ ປະເພດທີ່ດິນ ທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້ ຈຶ່ງອະນຸຍາດໃຫ້ເຊົ່າ ຫລື ສຳປະທານ ໂດຍກຳນົດເປົ້າໝາຍຂອງກິດຈະການ ການນຳໃຊ້ທີ່ດິນໃຫ້ລະອຽດ.

ໃນກໍລະນີເຂດໃຫ້ເຊົ່າ ຫລື ສຳປະທານທີ່ດິນ ຫາກກວມເອົາທີ່ດິນຂອງປະຊາຊົນ ຫລື ບຸກຄົນ ແມ່ນໃຫ້ຮັກສາສິດນຳໃຊ້ທີ່ດິນຂອງເຂົາເຈົ້າໄວ້ ໂດຍໃຫ້ຜູ້ເຊົ່າ ຫລື ຜູ້ສຳປະທານເຮັດສັນຍາກັບເຈົ້າຂອງທີ່ດິນ ຫລື ເອົາທີ່ດິນຕອນດັ່ງກ່າວເຂົ້າເປັນຮຸ້ນກັບຜູ້ເຊົ່າ ຫລື ຜູ້ສຳປະທານທີ່ດິນ ແຕ່ຕ້ອງໃຫ້ສອດຄ່ອງກັບມາດຕາ 56 ແລະ 67 ຂອງກົດໝາຍວ່າດ້ວຍທີ່ດິນ.

ໃນກໍລະນີມີຄວາມຈຳເປັນຕ້ອງທົດແທນຄືນ ແມ່ນໃຫ້ເຈົ້າຂອງໂຄງການຈ່າຍທົດແທນຄ່າເສັຍຫາຍແກ່ຜູ້ໄດ້ຮັບສິດນຳໃຊ້ ແລະ ສິດໃຊ້ທີ່ດິນນັ້ນຄືນ ໂດຍຄິດໄລ່ເອົາມູນຄ່າຂອງຜົນຜະລິດທີ່ໄດ້ຮັບ ຫລື ມູນຄ່າຂອງຜົນໄດ້ຮັບຈາກການພັດທະນາທີ່ດິນໃນເຂດນັ້ນ ເປັນບ່ອນອີງໃນການກຳນົດມູນຄ່າທົດແທນຄ່າເສັຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ຂອງດຳລັດສະບັບນີ້ ຫລື ຊອກຫາສະຖານທີ່ດິນບ່ອນອື່ນທີ່ເໝາະສົມປ່ຽນແທນໃຫ້ ໂດຍແມ່ນລັດຖະບານຈະຕົກລົງເປັນແຕ່ລະກໍລະນີ.

**ມາດຕາ 7. ຮູບການ ການເຊົ່າ ແລະ ສຳປະທານທີ່ດິນຂອງລັດ**

ການເຊົ່າ ແລະ ສຳປະທານທີ່ດິນມີ ສອງ ຮູບການ ຄື:

1. ຮູບການເຊົ່າ ແລະ ສຳປະທານທີ່ມີລັກສະນະການບໍລິການ ແມ່ນລັດມອບໃຫ້ຄູ່ສັນຍາດຳເນີນການກ່ຽວກັບການບໍລິການໃດໜຶ່ງເຊັ່ນ: ການໄຟຟ້າ, ນ້ຳປະປາ, ການກໍ່ສ້າງ, ການໄທລະຄົມມະນາຄົມ, ສວນສາທາລະນະ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ສະໜາມເດັກຫຼິ້ນ, ສະຖານີລົດຂົນສົ່ງຜູ້ໂດຍສານ, ສະຖານີລົດຂົນສົ່ງສິນຄ້າ, ສູນຟື້ນຟູສຸຂະພາບ ແລະ ອື່ນໆ;

2. ຮູບການສຳປະທານທີ່ມີລັກສະນະການຄ້າເຊັ່ນ: ທີ່ດິນປູກໄມ້, ທີ່ດິນກະສິກຳ, ທີ່ດິນພະລັງງານໄຟຟ້າ, ທີ່ດິນແຮ່ທາດ ແລະ ທີ່ດິນປະເພດອື່ນໆ ຕາມການຈັດສັນຂອງລັດ ເພື່ອດຳເນີນກິດຈະການຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

ຜູ້ສຳປະທານທີ່ດິນ ທີ່ພົວພັນກັບການນຳໃຊ້ຊັບພະຍາກອນທຳມະຊາດ ນອກຈາກຕ້ອງເສັຍຄ່າສຳປະທານແລ້ວຍັງຕ້ອງເສັຍຄ່າຊັບພະຍາກອນ, ອາກອນ, ພາສີ ແລະຄ່າທຳນຽມຕ່າງໆ ຕາມກົດໝາຍກຳນົດໄວ້.

ມາດຕາ 8. ຂອບເຂດການນຳໃຊ້ດຳລັດ

ລັດດຳລັດສະບັບນີ້ມີຜົນນຳໃຊ້ສະເພາະການເອົາທີ່ດິນຂອງລັດໃຫ້ເຊົ່າ ຫລື ສຳປະທານເທົ່ານັ້ນ.

## ພາກທີ II
## ການເຊົ່າທີ່ດິນຂອງລັດ
## ໝວດທີ 1
## ການໃຫ້ເຊົ່າທີ່ດິນຂອງລັດເພື່ອກິດຈະການ ໂຮງງານອຸດສາຫະກຳ, ນິຄົມອຸດສາຫະກຳ

ມາດຕາ 9. ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການໂຮງງານອຸດສາຫະກຳ, ນິຄົມອຸດສາຫະກຳ.

ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການໂຮງງານອຸດສາຫະກຳ, ນິຄົມອຸດສາຫະກຳ ແມ່ນໃຫ້ດຳເນີນໃນເຂດທີ່ລັດໄດ້ຈັດສັນໄວ້ສຳລັບກິດຈະການດັ່ງກ່າວນີ້ສະເພາະ ແລະ ຕ້ອງຮັບປະກັນບັນດາມາດຕະການໃນການປົກປັກຮັກສາສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍຜັງເມືອງ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການໂຮງງານອຸດສາຫະກຳ, ນິຄົມອຸດສາຫະກຳ ແມ່ນໃຫ້ດຳເນີນການປະມູນຕາມລະບຽບການ ແລະ ເງື່ອນໄຂຕ່າງໆທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງດຳລັດສະບັບນີ້.

ມາດຕາ 10. ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດເພື່ອກິດຈະການໂຮງງານອຸດສາຫະກຳ, ນິຄົມອຸດສາຫະກຳ.

ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການໂຮງງານອຸດສາຫະກຳ, ນິຄົມອຸດສາຫະກຳ ແມ່ນໃຫ້ດຳເນີນໃນເຂດທີ່ລັດໄດ້ຈັດສັນໃຫ້ເທົ່ານັ້ນ ໂດຍມອບໃຫ້ອົງການຄຸ້ມຄອງທີ່ດິນແຕ່ລະຂັ້ນເປັນຜູ້ຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍທີ່ດິນສະບັບເລກທີ 04/ສພຊ, ລົງ ວັນທີ 21 ຕຸລາ 2003.

ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ອະນຸຍາດໃຫ້ເຊົ່າທີ່ດິນຂອງລັດບໍ່ໃຫ້ເກີນຫ້າສິບ ເຮັກຕາ ຕໍ່ໜຶ່ງກິດຈະການ ແມ່ນອີງໃສ່ລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງກິດຈະການໂຮງງານ, ກຳນົດເວລາການເຊົ່າສູງສຸດບໍ່ເກີນ ສາມສິບປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະ

ກໍລະນີ ໂດຍເປັນເອກະພາບກັບພະແນກອຸດສາຫະກໍາ ແລະ ການຄ້າ, ຂະແໜງການ ກ່ຽວຂ້ອງ ພາຍ ໃນແຂວງ, ນະຄອນ ແລະ ຕາມການຕົກລົງຂອງອົງການປົກຄອງແຂວງ, ນະຄອນ.

ສໍາລັບນິຄົມອຸດສາຫະກໍາ ອະນຸຍາດໃຫ້ເຊົ່າທີ່ດິນຂອງລັດບໍ່ໃຫ້ເກີນ ໜຶ່ງຮ້ອຍຫ້າສິບ ເຮັກຕາ ຕໍ່ໜຶ່ງກິດຈະການ ແມ່ນອີງໃສ່ລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງກິດຈະການນິຄົມອຸດສາຫະກໍາ, ກໍານົດເວລາການເຊົ່າສູງສຸດບໍ່ເກີນ ສີ່ສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະ ກໍລະນີ ໂດຍເປັນເອກະພາບກັບພະແນກອຸດສາຫະກໍາ ແລະ ການຄ້າ, ຂະແໜງການກ່ຽວຂ້ອງ ພາຍໃນແຂວງ, ນະຄອນ ແລະ ຕາມການຕົກລົງຂອງອົງການປົກຄອງແຂວງ, ນະຄອນ.

ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ອະນຸຍາດໃຫ້ເຊົ່າທີ່ດິນຂອງລັດແຕ່ ຫ້າສິບ ເຮັກຕາ ຂຶ້ນໄປ ຫາ ສິບພັນ ເຮັກຕາ ຕໍ່ໜຶ່ງກິດຈະການ ແມ່ນອີງໃສ່ລັກສະນະ, ຂະໜາດ ແລະ ເງື່ອນໄຂ ຂອງກິດຈະການຂອງໂຮງງານ ແຕ່ກໍານົດເວລາການເຊົ່າ ສາມສິບປີ ຂຶ້ນໄປ ແຕ່ສູງສຸດບໍ່ເກີນ ຫ້າສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີ ໂດຍເປັນເອກະພາບກັບກະຊວງອຸດສາຫະກໍາ ແລະ ການຄ້າ, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຕາມການຕົກລົງຂອງ ລັດຖະບານ.

ສໍາລັບນິຄົມອຸດສາຫະກໍາ ອະນຸຍາດໃຫ້ເຊົ່າທີ່ດິນຂອງລັດແຕ່ ໜຶ່ງຮ້ອຍຫ້າສິບ ເຮັກຕາ ຂຶ້ນໄປ ຕໍ່ໜຶ່ງກິດຈະການ ແມ່ນອີງໃສ່ລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງກິດຈະການ ນິຄົມອຸດສາຫະກໍາ, ກໍານົດເວລາການເຊົ່າແຕ່ ສີ່ສິບ ປີ ຂຶ້ນໄປ ແຕ່ບໍ່ເກີນ ເຈັດສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີ ໂດຍເປັນເອກະພາບກັບກະຊວງອຸດສາຫະກໍາ ແລະ ການຄ້າ, ຂະແໜງການກ່ຽວຂ້ອງພາຍໃນແຂວງ, ນະຄອນ ແລະ ຕາມການຕົກລົງຂອງລັດຖະບານ.

ຖ້າຫາກເກີນກ່ວາ ສິບພັນ ເຮັກຕາຂຶ້ນໄປ ຕ້ອງໄດ້ຮັບການຮັບຮອງຈາກຄະນະປະຈໍາສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ.

ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການໂຮງງານອຸດສາຫະກໍາ, ນິຄົມອຸດສາຫະກໍາ ແມ່ນໃຫ້ເກັບຄ່າເຊົ່າ ນັບແຕ່ມື້ດໍາເນີນການບໍລິການເປັນຕົ້ນໄປ, ແຕ່ຕ້ອງປະຕິບັດໃຫ້ເຂັ້ມງວດ ຕາມກໍານົດເວລາການກໍ່ສ້າງກິດຈະການ ທີ່ໄດ້ກໍານົດໄວ້ໃນມາດຕາ 36 ຂອງດໍາລັດສະບັບນີ້.

### ມາດຕາ 11. ຂັ້ນຕອນການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດເພື່ອກິດຈະການໂຮງງານອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ

ຂັ້ນຕອນການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການໂຮງງານອຸດສາຫະກໍາ, ນິຄົມອຸດສາຫະກໍາ ແມ່ນໃຫ້ປະຕິບັດຕາມຂັ້ນຕອນຕ່າງໆ ທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

ຜູ້ຕ້ອງການເຊົ່າທີ່ດິນຂອງລັດ ຕ້ອງເຮັດບົດວິພາກເສດຖະກິດ - ເຕັກນິກ, ບົດສຶກສາຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ໂດຍໄດ້ຮັບການຢັ້ງຢືນຮັບຮອງຈາກຂະແໜງກ່ຽວຂ້ອງ ລວມທັງໄດ້ຮັບອະນຸຍາດລົງທຶນຈາກຄະນະກຳມະການຄຸ້ມຄອງການລົງທຶນ ຕາມລະບຽບກົດໝາຍ ແລ້ວຈຶ່ງສະເໜີຂໍອະນຸຍາດເຊົ່າທີ່ດິນນຳອົງການຄຸ້ມຄອງທີ່ດິນແຫ່ງຊາດ ຫລື ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ເພື່ອພິຈາລະນາຕາມຂອບເຂດສິດທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງດຳລັດສະບັບນີ້.

## ໝວດທີ 2
## ການໃຫ້ເຊົ່າທີ່ດິນຂອງລັດເພື່ອກິດຈະການກໍ່ສ້າງເຄຫະສະຖານ ແລະ ການບໍລິການ

**ມາດຕາ 12. ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການກໍ່ສ້າງເຄຫະສະຖານ ແລະ ການບໍລິການ**

ການໃຫ້ເຊົ່າທີ່ດິນຂອງລັດເພື່ອກິດຈະການກໍ່ສ້າງເຄຫະສະຖານ ແລະ ການບໍລິການແມ່ນໃຫ້ດຳເນີນໃນເຂດທີ່ລັດໄດ້ຈັດສັນໄວ້ສຳລັບກິດຈະການປຸກສ້າງເຊັ່ນ : ສູນການຄ້າ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ສວນສາທາລະນະ, ສະຖານທີ່ທ່ອງທ່ຽວ, ໂຮງຮຽນ, ໂຮງໝໍ, ຕະຫລາດ, ສະຖານີລົດຂົນສົ່ງຜູ້ໂດຍສານ ຫລື ຂົນສົ່ງສິນຄ້າ ແລະ ອື່ນໆ. ການປຸກສ້າງນັ້ນ ແມ່ນບໍ່ໃຫ້ແຕະຕ້ອງເຖິງສິດຜົນປະໂຫຍດຂອງຜູ້ອື່ນ ທັງຮັບປະກັນສະພາວະຄວາມເປັນຈິງຕ້ອງຍອມຮັບ. ການປຸກສ້າງຕ່າງໆຕ້ອງໄດ້ຮັບອະນຸຍາດຈາກອົງການຜັງເມືອງ, ຕ້ອງປະຕິບັດຕາມລະບຽບຜັງເມືອງຢ່າງເຂັ້ມງວດ ແລະ ຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງ, ຮັບປະກັນມາດຕະຖານເຕັກນິກຢ່າງຄົບຖ້ວນ ພ້ອມທັງຮັບປະກັນການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 13. ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການກໍ່ສ້າງເຄຫະສະຖານ ແລະ ການບໍລິການ.**

ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການກໍ່ສ້າງເຄຫະສະຖານ ແລະ ການບໍລິການ ແມ່ນໃຫ້ດຳເນີນໃນເຂດທີ່ລັດໄດ້ຈັດສັນໃຫ້ເທົ່ານັ້ນ ໂດຍມອບໃຫ້ອົງການຄຸ້ມຄອງທີ່ດິນເປັນຜູ້ຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍທີ່ດິນສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003.

ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ມີສິດອະນຸຍາດໃຫ້ເຊົ່າທີ່ດິນຂອງລັດບໍ່ໃຫ້ເກີນ ສິບຫ້າ ເຮັກຕາ ຕໍ່ໜຶ່ງກິດຈະການ ແມ່ນອີງໃສ່ລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງ

ກິດຈະການ ກຳນົດເວລາການເຊົ່າສູງສຸດບໍ່ເກີນ ສາມສິບປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີໃຫ້ຕາມອັດຕາ ໂດຍເປັນເອກະພາບກັບພະແນກໂຍທາທິການ ແລະ ຂົນສົ່ງ ແລະ ຕາມການຕົກລົງຂອງອົງການປົກຄອງແຂວງ, ນະຄອນ.

ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ມີສິດອະນຸຍາດໃຫ້ເຊົ່າທີ່ດິນຂອງລັດແຕ່ ສິບຫ້າ ເຮັກຕາ ຂຶ້ນໄປຫາ ສິບພັນ ເຮັກຕາ ຕໍ່ໜຶ່ງກິດຈະການ ແມ່ນອີງໃສ່ລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງກິດຈະການ, ກຳນົດເວລາການເຊົ່າ ສາມສິບປີ ຂຶ້ນໄປ ແຕ່ສູງສຸດບໍ່ເກີນ ຫ້າສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີ ໂດຍເປັນເອກະພາບກັບກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງທ້ອງຖິ່ນ ຕາມການຕົກລົງຂອງລັດຖະບານ. ຖ້າຫາກເກີນກ່ວາ ສິບພັນເຮັກຕາ ຂຶ້ນໄປ ຕ້ອງໄດ້ຮັບການຮັບຮອງຈາກຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ.

ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການການຄ້າ ແລະ ການບໍລິການ ແມ່ນໃຫ້ເກັບຄ່າເຊົ່າ ນັບແຕ່ມື້ດຳເນີນການບໍລິການເປັນຕົ້ນໄປ, ແຕ່ຕ້ອງປະຕິບັດໃຫ້ເຂັ້ມງວດຕາມກຳນົດເວລາການກໍ່ສ້າງກິດຈະການ ທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງດຳລັດສະບັບນີ້.

**ມາດຕາ 14. ເງື່ອນໄຂການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການກໍ່ສ້າງເຄຫະສະຖານ ແລະ ການບໍລິການ**

ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການກໍ່ສ້າງເຄຫະສະຖານ ແລະ ການບໍລິການ ແມ່ນ ໃຫ້ປະຕິບັດຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

ຜູ້ຕ້ອງການເຊົ່າທີ່ດິນຂອງລັດ ຕ້ອງເຮັດບົດວິພາກເສດຖະກິດ - ເຕັກນິກ, ບົດສຶກສາຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ໂດຍໄດ້ຮັບການຢັ້ງຢືນຮັບຮອງຈາກຂະແໜງກ່ຽວຂ້ອງ ລວມທັງໄດ້ຮັບອະນຸຍາດລົງທຶນຈາກຄະນະກຳມະການຄຸ້ມຄອງການລົງທຶນ ຕາມລະບຽບກົດໝາຍແລ້ວ ຈຶ່ງສະເໜີຂໍອະນຸຍາດເຊົ່າທີ່ດິນຂອງລັດ ນຳອົງການຄຸ້ມຄອງທີ່ດິນແຫ່ງຊາດ ຫລື ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ເພື່ອພິຈາລະນາຕາມຂອບເຂດສິດທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງດຳລັດສະບັບນີ້.

**ມາດຕາ 15. ຮູບການໃຫ້ເຊົ່າທີ່ດິນປຸກສ້າງຂອງລັດເພື່ອກິດຈະການກໍ່ສ້າງເຄຫະສະຖານ ແລະ ການບໍລິການ**

ການໃຫ້ເຊົ່າທີ່ດິນຂອງລັດເພື່ອກິດຈະການກໍ່ສ້າງເຄຫະສະຖານ ແລະ ການບໍລິການແມ່ນໃຫ້ດຳເນີນການປະມູນຕາມລະບຽບການໂດຍຮັບປະກັນໃຫ້ໄດ້ທັງຜົນປະໂຫຍດສູງສຸດຂອງລັດ,

ປະຊາຊົນ ແລະ ຂອງຜູ້ລົງທຶນ ພ້ອມທັງຮັບປະກັນບໍ່ໃຫ້ມີຜົນກະທົບທາງລົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

ໃນການກຳນົດລາຄາປະມູນເບື້ອງຕົ້ນຕ່ຳສຸດ ແມ່ນບໍ່ໃຫ້ຫລຸດອັດຕາ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າເຊົ່າ ແລະ ຄ່າສຳປະທານດິນຂອງລັດ.

## ໝວດທີ 3
## ການໃຫ້ເຊົ່າທີ່ດິນຂອງລັດເພື່ອດຳເນີນກິດຈະການທ່ອງທ່ຽວ

### ມາດຕາ 16. ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການທ່ອງທ່ຽວ

ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການທ່ອງທ່ຽວ ແມ່ນໃຫ້ດຳເນີນໃນເຂດທີ່ໄດ້ຈັດສັນໃຫ້ເປັນເຂດທ່ອງທ່ຽວ ທີ່ສາມາດໃຫ້ດຳເນີນກິດຈະການໄດ້ ຕາມທີ່ໄດ້ກຳນົດ ໄວ້ໃນມາດຕາ 55 ຂອງກົດໝາຍວ່າດ້ວຍການທ່ອງທ່ຽວ ຊຶ່ງຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ດິນ ແລະ ອົງການທ່ອງທ່ຽວໂດຍເປັນເອກະພາບກັບຂະແໜງການກ່ຽວຂ້ອງ.

### ມາດຕາ 17. ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດເພື່ອກິດຈະການທ່ອງທ່ຽວ

ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການທ່ອງທ່ຽວ ມອບໃຫ້ອົງການຄຸ້ມຄອງທີ່ດິນເປັນຜູ້ຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍທີ່ດິນສະບັບ ປີ 2003.

ຖ້າເປັນການເຊົ່າທີ່ດິນຂອງລັດສຳລັບແຫລ່ງທ່ອງທ່ຽວລະດັບທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງດຳລັດສະບັບນີ້ ແມ່ນມອບໃຫ້ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນເປັນຜູ້ອະນຸຍາດ ແລະ ກຳນົດເວລາການເຊົ່າສູງສຸດບໍ່ເກີນ ສາມສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີ ໂດຍເປັນເອກະພາບກັບພະແນກທ່ອງທ່ຽວ, ພະແນກຖະແຫລງຂ່າວ ແລະ ວັດທະນະທຳ, ພະແນກກະສິກຳ ແລະ ປ່າໄມ້, ຂະແໜງການກ່ຽວຂ້ອງຕາມການຕົກລົງຂອງອົງການປົກຄອງແຂວງ, ນະຄອນ.

ຖ້າເປັນການເຊົ່າທີ່ດິນຂອງລັດສຳລັບແຫລ່ງທ່ອງທ່ຽວລະດັບຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງດຳລັດສະບັບນີ້ ແມ່ນມອບໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ ເປັນຜູ້ອະນຸຍາດ ແລະ ກຳນົດເວລາການເຊົ່າ ສາມສິບ ປີຂຶ້ນໄປແຕ່ສູງສຸດບໍ່ເກີນ ຫ້າສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີໂດຍເປັນເອກະພາບກັບອົງການທ່ອງທ່ຽວແຫ່ງຊາດ, ກະຊວງຖະແຫລ່ງຂ່າວ ແລະ ວັດທະນະທຳ, ກະຊວງກະສິກຳ ແລະ ປ່າໄມ້, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ບ່ອນແຫຼ່ງທ່ອງທ່ຽວຕັ້ງຢູ່ຕາມການຕົກລົງຂອງລັດຖະບານ.

ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດເພື່ອການທ່ອງທ່ຽວ_ແມ່ນໃຫ້ເກັບຄ່າເຊົ່າ ນັບແຕ່ມື້ດຳເນີນການບໍລິການເປັນຕົ້ນໄປ, ແຕ່ຕ້ອງປະຕິບັດໃຫ້ເຂັ້ມງວດ ຕາມກຳນົດເວລາການກໍ່ສ້າງກິດຈະການທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງດຳລັດສະບັບນີ້.

**ມາດຕາ 18. ເງື່ອນໄຂການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການທ່ອງທ່ຽວ**

ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການທ່ອງທ່ຽວ ແມ່ນໃຫ້ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

ຜູ້ຕ້ອງການເຊົ່າທີ່ດິນຂອງລັດ ຕ້ອງເຮັດບົດວິພາກເສດຖະກິດ - ເຕັກນິກ, ບົດສຶກສາຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ໂດຍໄດ້ຮັບການຮັບຮອງຈາກຂະແໜງທ່ອງທ່ຽວ ແລະ ຂະແໜງກ່ຽວຂ້ອງລວມທັງໄດ້ຮັບອະນຸຍາດລົງທຶນ ຈາກຄະນະກຳມະການຄຸ້ມຄອງການລົງທຶນຕາມລະບຽບກົດໝາຍ ແລ້ວຈຶ່ງສະເໜີຂໍອະນຸຍາດເຊົ່າທີ່ດິນຂອງລັດ ນຳອົງການຄຸ້ມຄອງທີ່ດິນແຫ່ງຊາດ ຫລື ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ເພື່ອພິຈາລະນາ ຕາມຂອບເຂດສິດທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງດຳລັດສະບັບນີ້.

**ມາດຕາ 19. ຮູບການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການການທ່ອງທ່ຽວ**

ຮູບການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການທ່ອງທ່ຽວ ແມ່ນໃຫ້ດຳເນີນການປະມູນຕາມລະບຽບການ ແລະ ເງື່ອນໄຂຕ່າງໆທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງດຳລັດສະບັບນີ້.

## ໝວດທີ 4
## ການໃຫ້ເຊົ່າທີ່ດິນຂອງລັດເພື່ອກິດຈະການກິລາ

**ມາດຕາ 20. ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການກິລາ**

ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການກິລາ ແມ່ນໃຫ້ດຳເນີນໃນເຂດທີ່ລັດໄດ້ຈັດສັນໄວ້ສຳລັບກິດຈະການດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນວັກ 2 ມາດຕາ 15 ຂອງກົດໝາຍວ່າດ້ວຍຜັງເມືອງ ແລະ ການປຸກສ້າງສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮັບໃຊ້ມວນຊົນ ແລະ ນັກກິລາ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ດິນ, ຂະແໜງໂຍທາທິການ ແລະຂົນສົ່ງ ໂດຍເປັນເອກະພາບກັບຄະນະກຳມະການກິລາແຫ່ງຊາດ, ຕ້ອງຮັບປະກັນມາດຕະຖານເຕັກນິກຢ່າງຄົບຖ້ວນ ພ້ອມທັງການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 21. ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດເພື່ອກິດຈະການກິລາ**

ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການກິລາ ມອບໃຫ້ອົງການຄຸ້ມຄອງທີ່ດິນເປັນຜູ້ຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍທີ່ດິນສະບັບປີ 2003

ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ມີສິດອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ບໍ່ໃຫ້ເກີນ ສາມສິບ ເຮັກຕາຕໍ່ໜຶ່ງກິດຈະການ ແລະກຳນົດເວລາການເຊົ່າສູງສຸດບໍ່ເກີນ ສາມສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີໂດຍເປັນເອກະພາບກັບຄະນະກຳມະການກິລາ, ພະແນກໂຍທາທິການ ແລະ ຂົນສົ່ງ ແລະ ຕາມການຕົກລົງຂອງອົງການປົກຄອງແຂວງ, ນະຄອນ.

ອົງການຄຸ້ມຄອງທີ່ດິນແຫ່ງຊາດມີສິດອະນຸຍາດໃຫ້ເຊົ່າທີ່ດິນຂອງລັດແຕ່ ສາມສິບ ເຮັກຕາ ຂຶ້ນໄປຫາ ສິບພັນ ເຮັກຕາຕໍ່ໜຶ່ງກິດຈະການ ແລະ ກຳນົດເວລາການເຊົ່າສາມສິບ ປີຂຶ້ນໄປແຕ່ສູງສຸດ ບໍ່ເກີນ ຫ້າສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີ ໂດຍເປັນເອກະພາບກັບຄະນະກຳມະການກິລາແຫ່ງຊາດ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງທ້ອງຖິ່ນຕາມການຕົກລົງຂອງລັດຖະບານ. ຖ້າຫາກເກີນກ່ວາ ສິບພັນ ເຮັກຕາ ຂຶ້ນໄປຕ້ອງໄດ້ຮັບການຮັບຮອງຈາກຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ.

ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດເພື່ອການກິລາ ແມ່ນໃຫ້ເກັບຄ່າເຊົ່ານັບແຕ່ມື້ດຳເນີນການບໍລິການເປັນຕົ້ນໄປ, ແຕ່ຕ້ອງປະຕິບັດໃຫ້ເຂັ້ມງວດ ຕາມກຳນົດເວລາການກໍ່ສ້າງກິດຈະການທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງດຳລັດສະບັບນີ້.

**ມາດຕາ 22. ເງື່ອນໄຂການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດເພື່ອກິດຈະການກິລາ**

ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການກິລາ ແມ່ນໃຫ້ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

ຜູ້ຕ້ອງການເຊົ່າທີ່ດິນຂອງລັດ ຕ້ອງເຮັດບົດວິພາກເສດຖະກິດ - ເຕັກນິກ, ບົດສຶກສາຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ໂດຍໄດ້ຮັບການຮັບຮອງຈາກຄະນະກຳມະການກິລາແຫ່ງຊາດ ແລະ ຂະແໜງການກ່ຽວຂ້ອງ ລວມທັງໄດ້ຮັບອະນຸຍາດລົງທຶນຈາກຄະນະກຳມະການຄຸ້ມຄອງການລົງທຶນຕາມລະບຽບກົດໝາຍແລ້ວ ຈຶ່ງສະເໜີຂໍອະນຸຍາດເຊົ່າທີ່ດິນຂອງລັດນຳອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ຫລື ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ເພື່ອພິຈາລະນາ ຕາມຂອບເຂດສິດທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງດຳລັດສະບັບນີ້.

**ມາດຕາ 23. ຮູບການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະການກິລາ**

ຮູບການໃຫ້ເຊົ່າທີ່ດິນຂອງລັດ ເພື່ອກິດຈະກິລາ ແມ່ນໃຫ້ດຳເນີນການປະມູນຕາມລະບຽບການ ແລະ ເງື່ອນໄຂຕ່າງໆທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງດຳລັດສະບັບນີ້.

## ໝວດທີ 5
## ການໃຫ້ເຊົ່າທີ່ດິນຂອງລັດເພື່ອຈຸດປະສົງທາງດ້ານການທູດ ຫລື ອົງການຈັດຕັ້ງສາກົນ

**ມາດຕາ 24. ການເຊົ່າທີ່ດິນຂອງລັດເພື່ອຈຸດປະສົງທາງດ້ານການທູດ ຫລື ອົງການຈັດຕັ້ງສາກົນ**

ການໃຫ້ເຊົ່າທີ່ດິນຂອງລັດ ເພື່ອຈຸດປະສົງທາງດ້ານການທູດ ຫລື ອົງການຈັດຕັ້ງສາກົນ ແມ່ນໃຫ້ດຳເນີນໃນເຂດທີ່ລັດໄດ້ຈັດສັນໄວ້ສຳລັບວຽກງານດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ໂດຍເປັນເອກະພາບກັບກະຊວງການຕ່າງປະເທດ.

**ມາດຕາ 25. ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອຈຸດປະສົງທາງດ້ານການທູດ ຫລື ອົງການຈັດຕັ້ງສາກົນ**

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ມີສິດອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອເປົ້າໝາຍທາງດ້ານການທູດ ຫຼື ອົງການຈັດຕັ້ງສາກົນ ແຕ່ສູງສຸດກຳນົດເວລາບໍ່ໃຫ້ເກີນ ເກົ້າສິບເກົ້າປີ ໂດຍເປັນເອກະພາບກັບກະຊວງການຕ່າງປະເທດ ຕາມການຕົກລົງຂອງລັດຖະບານ.

ການອະນຸຍາດໃຫ້ເຊົ່າທີ່ດິນຂອງລັດ ເພື່ອເປົ້າໝາຍທາງດ້ານການທູດ ຫລື ອົງການຈັດຕັ້ງສາກົນ ແມ່ນບໍ່ໃຫ້ມີການຍົກເວັ້ນຄ່າເຊົ່າ. ເວັ້ນເສຍແຕ່ລັດຖະບານມີສັນຍາສະເພາະກັບປະເທດທີ່ກ່ຽວຂ້ອງ.

ບໍ່ວ່າໃນກໍລະນີໃດກໍ່ຕາມລັດບໍ່ອະນຸຍາດໃຫ້ລັດຖະບານປະເທດທີ່ກ່ຽວຂ້ອງ ຫລື ອົງການຈັດຕັ້ງສາກົນໃດໜຶ່ງເຊົ່າທີ່ດິນຈາກພົນລະເມືອງລາວໂດຍກົງ ເພື່ອເປົ້າໝາຍທາງດ້ານການທູດ ຫລື ອົງການຈັດຕັ້ງສາກົນ.

## ພາກທີ III
## ການສຳປະທານທີ່ດິນຂອງລັດ
## ໝວດທີ 1
## ການສຳປະທານທີ່ດິນຂອງລັດເພື່ອກິດຈະການກະສິກຳ ແລະ ປູກໄມ້

**ມາດຕາ 26 . ການສຳປະທານທີ່ດິນຂອງລັດເພື່ອກິດຈະການກະສິກຳ ແລະ ປູກໄມ້**

ທີ່ດິນຂອງລັດທີ່ໃຫ້ສຳປະທານເພື່ອກິດຈະການກະສິກຳ ແມ່ນໃຫ້ດຳເນີນໃນພື້ນທີ່ ທີ່ດິນກະສິກຳ ເພື່ອປູກພືດເສດຖະກິດທີ່ລັດໄດ້ຈັດສັນໄວ້ເທົ່ານັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍກະສິກຳ.

ທີ່ດິນຂອງລັດທີ່ໃຫ້ສຳປະທານ ເພື່ອກິດຈະການປູກໄມ້ອຸດສາຫະກຳ ຫລື ໄມ້ເສດຖະກິດ ແລະ ເຄື່ອງປ່າຂອງດົງ ແມ່ນໃຫ້ດຳເນີນໃນພື້ນທີ່ດິນປອກໂຫລ້ນ, ທີ່ດິນປ່າຊຸດໂຊມທີ່ບໍ່ສາມາດຟື້ນຟູຄືນດ້ວຍຕົວມັນເອງ ທີ່ລັດໄດ້ຈັດສັນໃຫ້ເທົ່ານັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 69 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບປີ 2007.

ເຂດພື້ນທີ່ດິນ ທີ່ໃຫ້ສຳປະທານແມ່ນໃຫ້ດຳເນີນໃນເຂດພື້ນທີ່ດິນຊານເມືອງ ແລະ ຊົນນະບົດເທົ່ານັ້ນ.

**ມາດຕາ 27. ເງື່ອນໄຂການໃຫ້ສຳປະທານທີ່ດິນຂອງລັດເພື່ອກິດຈະການກະສິກຳ ແລະ ປູກໄມ້**

ການໃຫ້ສຳປະທານທີ່ດິນເພື່ອປູກພືດເສດຖະກິດ, ຟື້ນຟູປ່າ, ປູກປ່າ, ປູກຕົ້ນໄມ້ອຸດສາຫະກຳ, ໄມ້ເສດຖະກິດ, ເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມເງື່ອນໄຂຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 74 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບປີ 2007 ດັ່ງນີ້:

1. ສຶກສາຂໍ້ມູນທາງດ້ານເສດຖະກິດ - ສັງຄົມ, ຄວາມເໝາະສົມທາງທຳມະຊາດເຊັ່ນ: ດິນ, ອາກາດ, ຄວາມສູງຈາກລະດັບນ້ຳທະເລ, ປະລິມານນ້ຳຝົນ, ແຫລ່ງນ້ຳ, ສິດນຳໃຊ້ທີ່ດິນ, ແຮງງານທ້ອງຖິ່ນ, ສຳຫລວດສະພາບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ອື່ນໆທີ່ຈຳເປັນ;

2. ສ້າງບົດວິພາກເສດຖະກິດ-ເຕັກນິກ ໂດຍຜ່ານການຮັບຮອງຈາກອົງການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ຂະແໜງການທີ່ກ່ຽວຂ້ອງ;

3. ສ້າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມລວມ ທັງມາດຕະການແກ້ໄຂຢ່າງເໝາະສົມ ໂດຍການຢັ້ງຢືນຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ;

4. ສ້າງແຜນດຳເນີນງານ ໂດຍເລັ່ງໃສ່ການປົກປັກຮັກສາແຫລ່ງນ້ຳ ແລະ ສິ່ງແວດລ້ອມ, ການບຸກເບີກເນື້ອທີ່, ການພັດທະນາບ້ານ, ການສົ່ງເສີມປະຊາຊົນມີສ່ວນຮ່ວມໃນການດຳເນີນການຜະລິດ, ການນຳໃຊ້ເຕັກໂນໂລຊີ ແລະ ອື່ນໆ ຕະຫລອດເຖິງການແບ່ງປັນຜົນປະໂຫຍດ;

5. ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງອື່ນ ໆ.

**ມາດຕາ 28. ການອະນຸຍາດໃຫ້ສຳປະທານທີ່ດິນປ່າຊຸດໂຊມເພື່ອກິດຈະການກະສິກຳ ແລະ ປູກໄມ້**

ການອະນຸຍາດໃຫ້ສຳປະທານເນື້ອທີ່ດິນປ່າຊຸດໂຊມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 75 ຂອງກົດໝາຍວ່າດ້ວຍປ່າໄມ້ສະບັບປີ 2007 ແລະ ຂໍ້ 4 ມາດຕາ 10 ຂອງກົດໝາຍວ່າດ້ວຍທີ່ດິນສະບັບປີ 2003 ໃຫ້ປະຕິບັດຕາມຂອບເຂດສິດ ດັ່ງນີ້:

1. ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ເປັນຜູ້ອະນຸຍາດໃຫ້ສຳປະທານເນື້ອທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນເອງໄດ້ ບໍ່ເກີນ ໜຶ່ງຮ້ອຍຫ້າສິບ ເຮັກຕາ ຕໍ່ໜຶ່ງໂຄງການ ແລະກຳນົດເວລາສຳປະທານສູງສຸດບໍ່ເກີນ ສາມສິບປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ ໂດຍ

ເປັນເອກະພາບກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ ແລະ ຕາມການຕົກລົງຂອງອົງການປົກຄອງແຂວງ, ນະຄອນ ;

2. ອົງການຄຸ້ມຄອງທີ່ດິນແຫ່ງຊາດ ມີສິດອະນຸຍາດໃຫ້ສຳປະທານເນື້ອທີ່ດິນປ່າຊຸດໂຊມທີ່ບໍ່ສາມາດຟື້ນຟູຄືນເອງໄດ້ແຕ່ ໜຶ່ງຮ້ອຍຫ້າສິບ ເຮັກຕາ ຫາ ສິບຫ້າພັນ ເຮັກຕາ ຕໍ່ໜຶ່ງໂຄງການ ແລະ ກຳນົດເວລາການສຳປະທານເກີນກວ່າ ສາມສິບປີ ແຕ່ສູງສຸດບໍ່ໃຫ້ເກີນ ສີ່ສິບປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ ໂດຍເປັນເອກະພາບກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ຕາມການຕົກລົງຂອງລັດຖະບານ. ຖ້າເກີນກວ່າ ສິບຫ້າພັນ ເຮັກຕາ ຕ້ອງໄດ້ມີການຮັບຮອງຈາກຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ.

ການອະນຸຍາດໃຫ້ສຳປະທານທີ່ດິນປ່າໄມ້ຊຸດໂຊມ ເພື່ອກິດຈະການກະສິກຳ ແລະ ປູກໄມ້ ແມ່ນໃຫ້ເກັບຄ່າສຳປະທານນັບແຕ່ມື້ເກັບກູ້ຜົນຜະລິດເປັນຕົ້ນໄປ, ແຕ່ຕ້ອງປະຕິບັດໃຫ້ເຂັ້ມງວດຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງດຳລັດສະບັບນີ້.

**ມາດຕາ 29. ການອະນຸຍາດໃຫ້ສຳປະທານທີ່ດິນປອກໂຫລ້ນເພື່ອກິດຈະການກະສິກຳ ແລະ ປູກໄມ້**

ການອະນຸຍາດໃຫ້ສຳປະທານເນື້ອທີ່ດິນປອກໂຫລ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 76 ຂອງກົດໝາຍວ່າດ້ວຍປ່າໄມ້ສະບັບປີ 2007 ແລະຂໍ້ 4 ມາດຕາ 10 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປີ 2003 ໃຫ້ປະຕິບັດຕາມຂອບເຂດສິດ ດັ່ງນີ້:

1. ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ມີສິດອະນຸຍາດໃຫ້ສຳທານທີ່ດິນປອກໂຫລ້ນໄດ້ບໍ່ເກີນ ຫ້າຮ້ອຍ ເຮັກຕາ ຕໍ່ໜຶ່ງໂຄງການ ແລະ ກຳນົດເວລາການສຳປະທານສູງສຸດບໍ່ເກີນ ສີ່ ສິບ ປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ໂດຍເປັນເອກະພາບກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ ຕາມການຕົກລົງຂອງອົງການປົກຄອງແຂວງ, ນະຄອນ ;

2. ອົງການຄຸ້ມຄອງທີ່ດິນແຫ່ງຊາດ ມີສິດອະນຸຍາດໃຫ້ສຳປະທານທີ່ດິນປອກໂຫລ້ນໄດ້ເກີນກວ່າ ຫ້າຮ້ອຍ ເຮັກຕາ ຫາ ສາມສິບພັນ ເຮັກຕາ ຕໍ່ໜຶ່ງໂຄງການ ແລະ ກຳນົດເວລາການເຊົ່າ ຫລື ສຳປະທານ ເກີນກວ່າ ສີ່ສິບປີ ແຕ່ສູງສຸດ ບໍ່ໃຫ້ເກີນ ຫົກສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ ໂດຍເປັນເອກະພາບກັບກະຊວງກະສິກຳ ແລະ ປ່າໄມ້ ຕາມຕົກລົງຂອງລັດຖະ ບານ, ຖ້າເກີນກວ່າ ສາມສິບພັນ ເຮັກຕາ ຕ້ອງໄດ້ມີການຮັບຮອງຈາກຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ.

ສຳລັບເຂດຊົນນະບົດ, ຫ່າງໄກສອກຫລີກ ກຳນົດເວລາການສຳປະທານ ແມ່ນເກີນກວ່າ ສີ່ສິບ ປີ ແຕ່ສູງສຸດບໍ່ໃຫ້ເກີນ ເຈັດສິບປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ.

ການອະນຸຍາດໃຫ້ສຳປະທານທີ່ດິນປອກໂຫລັນ ເພື່ອກິດຈະການກະສິກຳ ແລະ ປູກໄມ້ ແມ່ນໃຫ້ເກັບຄ່າສຳປະທານນັບແຕ່ມື້ເກັບກູ້ຜົນຜະລິດເປັນຕົ້ນໄປ,ແຕ່ຕ້ອງປະຕິບັດໃຫ້ເຂັ້ມງວດ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງດຳລັດສະບັບນີ້.

## ໝວດທີ 2
## ການສຳປະທານທີ່ດິນຂອງລັດເພື່ອດຳເນີນກິດການແຮ່ທາດ

**ມາດຕາ 30. ເຂດພື້ນທີ່ດິນຂອງລັດ ໃຫ້ສຳປະທານເພື່ອກິດຈະການແຮ່ທາດ**

ເຂດພື້ນທີ່ດິນ ທີ່ໃຫ້ສຳປະທານເພື່ອກິດຈະການແຮ່ທາດ ແມ່ນໃຫ້ດຳເນີນໃນເຂດພື້ນທີ່ດິນທີ່ໄດ້ຈັດສັນສຳລັບການຂຸດຄົ້ນບໍ່ແຮ່ເທົ່ານັ້ນ ແລະ ຕ້ອງປະຕິບັດຕາມຂັ້ນຕອນຕ່າງໆຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍທີ່ດິນ.

**ມາດຕາ 31. ການອະນຸຍາດໃຫ້ສຳປະທານທີ່ດິນຂອງລັດເພື່ອກິດຈະການແຮ່ທາດ**

ການອະນຸຍາດໃຫ້ສຳປະທານທີ່ດິນຂອງລັດ ເພື່ອດຳເນີນກິດຈະການແຮ່ທາດ ມີແຕ່ລັດຖະບານເທົ່ານັ້ນເປັນຜູ້ມີສິດຕົກລົງ ຊຶ່ງກຳນົດເວລາໃຫ້ສຳປະທານການດຳເນີນການຂຸດຄົ້ນບໍ່ແຮ່ບໍ່ໃຫ້ເກີນ ຊາວ ປີ ນັບແຕ່ມື້ໄດ້ຮັບອະນຸຍາດສຳປະທານເປັນຕົ້ນໄປ ແຕ່ສາມາດຕໍ່ໄດ້ຕາມແຕ່ລະກໍລະນີ ແລະ ບໍລິມາດຂອງແຮ່ທາດ ບົນພື້ນຖານການສະເໜີຂອງກະຊວງພະລັງງານ ແລະ ບໍ່ແຮ່ ໂດຍເປັນເອກະພາບກັບອົງການຄຸ້ມຄອງທີ່ດິນແຫ່ງຊາດ, ກະຊວງກະສິກຳ ແລະ ປ່າໄມ້, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ.

ການອະນຸຍາດໃຫ້ສຳປະທານທີ່ດິນຂອງລັດ ເພື່ອກິດຈະການບໍ່ແຮ່ ແມ່ນບໍ່ໃຫ້ມີການຍົກເວັ້ນຄ່າສຳປະທານ.

## ພາກທີ IV
## ການຈັດຕັ້ງປະຕິບັດໃນການໃຫ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດ
## ໝວດທີ 1
## ການກຳນົດໄລຍະເວລາໃຫ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດ

**ມາດຕາ 32. ການກຳນົດໄລຍະເວລາການໃຫ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດ**

ການໃຫ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດ ມີ 3 ໄລຍະຄື :

1. ການໃຫ້ເຊົ່າໄລຍະສັ້ນ;

2. ການໃຫ້ເຊົ່າ ຫລື ສຳປະທານໄລຍະກາງ;

3. ການໃຫ້ເຊົ່າ ຫລື ສຳປະທານໄລຍະຍາວ.

**ມາດຕາ 33. ປະເພດທີ່ດິນຂອງລັດ ແລະ ກຳນົດເວລາໃຫ້ເຊົ່າໄລຍະສັ້ນ**

ທີ່ດິນ ທີ່ໃຫ້ເຊົ່າໄລຍະສັ້ນ ແມ່ນປະເພດທີ່ດິນປຸກສ້າງສຳລັບທີ່ຢູ່ອາໄສ ແລະ ບໍລິການທີ່ລັດໄດ້ຈັດສັນໄວ້ແລ້ວ, ກຳນົດເວລາສູງສຸດບໍ່ເກີນ ຫ້າ ປີ ແລະ ສາມາດຕໍ່ໄດ້. ສຳລັບການອະນຸຍາດໃຫ້ເຊົ່າທີ່ດິນ ແມ່ນໃຫ້ປະຕິບັດຕາມວັກ 01 ຂໍ້ 01 ມາດຕາ 36 ຂອງດຳລັດສະບັບນີ້.

**ມາດຕາ 34. ປະເພດທີ່ດິນຂອງລັດ ແລະ ກຳນົດເວລາໃຫ້ເຊົ່າໄລຍະກາງ**

ທີ່ດິນທີ່ໃຫ້ເຊົ່າໄລຍະກາງ ແມ່ນປະເພດທີ່ດິນປຸກສ້າງ ສຳລັບກິດຈະການການບໍລິການ, ການທ່ອງທ່ຽວ ແລະ ການກິລາທີ່ລັດຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນໄວ້ແລ້ວກຳນົດເວລາເກີນກວ່າ ຫ້າ ປີຂຶ້ນໄປຫາ ສິບຫ້າ ປີ ແລະ ສາມາດຕໍ່ໄດ້. ສຳລັບການອະນຸຍາດໃຫ້ເຊົ່າທີ່ດິນ ແມ່ນໃຫ້ປະຕິບັດຕາມມາດຕາ 17, 21 ແລະ ວັກ 01 ຂໍ້ 02 ມາດຕາ 36 ຂອງດຳລັດສະບັບນີ້.

**ມາດຕາ 35. ທີ່ດິນຂອງລັດທີ່ໃຫ້ເຊົ່າ ແລະ ສຳປະທານໄລຍະຍາວ**

ທີ່ດິນ ທີ່ໃຫ້ເຊົ່າ ຫລື ສຳປະທານໄລຍະຍາວ ແມ່ນທີ່ດິນ ທີ່ລັດໄດ້ຈັດສັນ, ກຳນົດເຂດ ແລະ ກຳນົດປະເພດໄວ້ແລ້ວ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍຕ່າງໆໃນການສົ່ງເສີມໃຫ້ມີການລົງທຶນພັດທະນາກໍ່ສ້າງພື້ນຖານໂຄງລ່າງ, ອຸດສາຫະກຳ, ປູກໄມ້, ແຮ່ທາດ ແລະ ອື່ນໆກຳນົດເວລາເກີນກວ່າ 15 ປີ ຂຶ້ນໄປຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ແລະ ປະຕິບັດຕາມວັກ 01 ຂໍ້ 03 ແລະ ວັກ 02 ມາດຕາ 36 ຂອງດຳລັດສະບັບນີ້ .

**ມາດຕາ 36. ກຳນົດໄລຍະເວລາການກໍ່ສ້າງກິດຈະການ ຫລື ດຳເນີນໂຄງການ**

ກຳນົດໄລຍະເວລາການກໍ່ສ້າງກິດຈະການ ຫລື ດຳເນີນໂຄງການ ຕ້ອງໃຫ້ສຳເລັດພາຍໃນກຳນົດເວລາ ຕາມເງື່ອນໄຂຂະໜາດຂອງກິດຈະການດັ່ງນີ້ :

1. ກິດຈະການຂະໜາດນ້ອຍ ໄລຍະເວລາການກໍ່ສ້າງກິດຈະການ ຫລື ດຳເນີນໂຄງການຕ້ອງໃຫ້ສຳເລັດພາຍໃນ ຫົກ ເດືອນ ຫາ ໜຶ່ງ ປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ;

2. ກິດຈະການຂະໜາດກາງ ໄລຍະເວລາການກໍ່ສ້າງກິດຈະການ ຫລື ດຳເນີນໂຄງການຕ້ອງໃຫ້ສຳເລັດພາຍ ໃນ ໜຶ່ງ ປີ ຫາ ສອງ ປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ;

3. ກິດຈະການຂະໜາດໃຫຍ່ໄລຍະເວລາການກໍ່ສ້າງກິດຈະການ ຫລື ດຳເນີນໂຄງການຕ້ອງໃຫ້ສຳເລັດພາຍໃນ ສອງ ຫາ ສາມ ປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ.

ສຳລັບການກໍ່ສ້າງນິຄົມອຸດສາຫະກຳ ແມ່ນໃຫ້ສຳເລັດພາຍໃນ ເຈັດປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ.

ຖ້າຜູ້ເຊົ່າ ຫລື ຜູ້ສຳປະທານທີ່ດິນຂອງລັດ ຫາກບໍ່ສາມາດສຳເລັດການກໍ່ສ້າງຕາມກຳນົດເວລາທີ່ກ່າວມາເທິງນີ້ ໃຫ້ຖືວ່າເປັນເງື່ອນໄຂຂອງການຍົກເລີກສັນຍາທີ່ໄດ້ເຊັນກັນ ແລະ ຊັບສິນທັງໝົດທີ່ກໍ່ສ້າງຂຶ້ນນັ້ນ ຈະຕົກເປັນກຳມະສິດຂອງລັດໂດຍບໍ່ມີການທົດແທນຄືນແຕ່ຢ່າງໃດ. ເວັ້ນເສັຍມີເຫດຜົນ ແລະ ເງື່ອນໄຂພຽງພໍ ຊຶ່ງລັດຖະບານຈະຕົກລົງເປັນແຕ່ລະກໍລະນີໄປ.

## ມາດຕາ 37. ເນື້ອໃນຂອງສັນຍາເຊົ່າ ຫລື ສຳປະທານທີ່ດິນຂອງລັດ

ສັນຍາເຊົ່າ ຫລື ສຳປະທານທີ່ດິນຂອງລັດ ຕ້ອງກຳນົດເປົ້າໝາຍ, ກຳນົດເວລາ, ເງື່ອນໄຂ, ຄ່າເຊົ່າ, ຄ່າສຳປະທານ, ໃນທຸກໆ ຫ້າ ປີໃດ ແມ່ນໃຫ້ເພີ່ມຂຶ້ນບໍ່ຕ່ຳກວ່າ ຫ້າ ສ່ວນຮ້ອຍຂອງມູນຄ່າເຊົ່າ ຫລື ຄ່າສຳປະທານໃນປີນັ້ນ ໂດຍປະຕິບັດຕາມຮູບການຂອງສັນຍາທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ການຈັດຕັ້ງປະຕິບັດສັນຍາເຊົ່າ ຫລື ສຳປະທານທີ່ດິນຂອງລັດ ທີ່ໄດ້ຮັບອະນຸຍາດແລ້ວຕ້ອງມີການລາຍງານ ແລະ ທົບທວນປະເມີນຜົນໃນແຕ່ລະໄລຍະຂອງກິດຈະການ ໃຫ້ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ.

## ມາດຕາ 38. ຜົນປະໂຫຍດທີ່ໄດ້ຮັບຈາກການເຊົ່າ ຫລື ສຳປະທານທີ່ດິນຂອງລັດ

ຜູ້ເຊົ່າ ຫລື ຜູ້ສຳປະທານທີ່ດິນຂອງລັດ ມີສິດໄດ້ຮັບຜົນປະໂຫຍດຢ່າງຖືກຕ້ອງຕາມລະບຽບກົດໝາຍ ດັ່ງນີ້ :

- ຂາຍຊັບສິນ ທີ່ເປັນກຳມະສິດຂອງຕົນ ທີ່ຕິດພັນກັບສັນຍາເຊົ່າ ຫລື ສຳປະທານທີ່ດິນແຕ່ລັດ ມີບູລິມະສິດໃນການຊື້ຊັບສິນເຫລົ່ານັ້ນ ຖ້າລັດຫາກຕ້ອງການ;
- ນຳໃຊ້ຊັບສິນ ທີ່ເປັນກຳມະສິດຂອງຕົນ ຊຶ່ງຕິດພັນກັບສັນຍາເຊົ່າ ຫລື ສຳປະທານທີ່ດິນຂອງລັດ ເພື່ອໃຊ້ເປັນຫລັກຊັບຄ້ຳປະກັນກັບທະນາຄານ ຫລື ສະຖາບັນການເງິນ ທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍຢູ່ ສປປ ລາວ. ສຳລັບຊັບຄົງທີ່ນັ້ນຕ້ອງໄດ້ຮັບຄວາມເຫັນດີຈາກລັດເສັຍກ່ອນ;
- ໃຫ້ສືບຕໍ່ສິດທີ່ໄດ້ຮັບຈາກການເຊົ່າ ຫລື ສຳປະທານທີ່ດິນຂອງລັດ ແຕ່ຕ້ອງໄດ້ຮັບຄວາມເຫັນດີ ຈາກລັດເສັຍກ່ອນ ແລະ ສັນຍາເຊົ່າ ຫລື ສຳປະທານຕໍ່ນັ້ນບໍ່ໃຫ້ເກີນອາຍຸນຳໃຊ້ທີ່ຍັງເຫລືອຂອງສັນຍາແມ່ ແລະ ຕ້ອງເສັຍຄ່າທຳນຽມຕ່າງໆ ຕາມລະບຽບການ;
- ສືບທອດສັນຍາເຊົ່າ ຫລື ສຳປະທານທີ່ດິນຂອງລັດຕາມອາຍຸຂອງສັນຍາ;
- ໃຊ້ສັນຍາເຊົ່າ ຫລື ສຳປະທານທີ່ດິນຂອງລັດ ເພື່ອຮ່ວມທຶນກັບບຸກຄົນອື່ນແຕ່ຕ້ອງໄດ້ຮັບຄວາມເຫັນດີຈາກລັດເສັຍກ່ອນ;

- ຈະໄດ້ຮັບການທົດແທນຄືນສິ່ງກໍ່ສ້າງຕ່າງໆ ໃນກໍລະນີລັດຖະບານມີຄວາມຕ້ອງການນໍາໃຊ້ທີ່ດິນຕອນດັ່ງກ່າວເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງເພື່ອສາທາລະນະປະໂຫຍດ.

**ມາດຕາ 39. ພັນທະຂອງຜູ້ເຊົ່າ ແລະ ຜູ້ສໍາປະທານທີ່ດິນຂອງລັດ**

ຜູ້ເຊົ່າ ແລະ ຜູ້ສໍາປະທານທີ່ດິນຂອງລັດມີພັນທະດັ່ງນີ້ :

- ໃຊ້ທີ່ດິນໂດຍຖືກຕ້ອງຕາມເປົ້າໝາຍ ແລະ ຕ້ອງຮັບປະກັນປະສິດທິຜົນຂອງການດໍາເນີນກິດຈະການ;
- ຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນຂອງລັດທີ່ເຊົ່າ ຫລື ສໍາປະທານ ບໍ່ໃຫ້ມີການເຊາະເຈື່ອນ, ຍຸບລົງ, ເສື່ອມໂຊມ, ຮັກສາຄຸນນະພາບໃຫ້ເໝາະສົມກັບແຕ່ລະປະເພດດິນ ແລະ ບໍ່ເຮັດໃຫ້ເນື້ອທີ່ດິນແຕ່ລະປະເພດຫລຸດລົງໂດຍບໍ່ໄດ້ຮັບອະນຸຍາດ;
- ບໍ່ສ້າງຄວາມເສັຍຫາຍໃຫ້ແກ່ຄຸນນະພາບດິນ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທໍາມະຊາດ ຫລື ສັງຄົມ;
- ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
- ປະຕິບັດສະພາວະຄວາມເປັນຈິງຕ້ອງຍອມຮັບຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;
- ເສັຍຄ່າເຊົ່າທີ່ດິນ, ຄ່າສໍາປະທານ, ຄ່າຊັບພະຍາກອນທໍາມະຊາດ, ອາກອນ, ພາສີ ແລະ ຄ່າທໍານຽມອື່ນ ໆ ກ່ຽວກັບທີ່ດິນຢ່າງຄົບຖ້ວນ;
- ຜູ້ເຊົ່າບໍ່ມີສິດທັບປ່ຽນສະພາບຂອງທີ່ດິນ ແລະ ສິ່ງປຸກສ້າງ ຢູ່ເທິງໜ້າດິນ ເວັ້ນເສຍກໍລະນີຈໍາເປັນແຕ່ຕ້ອງມີການຕົກລົງກັນໃນສັນຍາລະຫວ່າງອົງການຄຸ້ມຄອງທີ່ດິນ ແລະ ຜູ້ເຊົ່າ;
- ເມື່ອໝົດກໍານົດໄລຍະການເຊົ່າ ຫລື ສໍາປະທານ ຫລື ມີການຍົກເລີກສັນຍາເຊົ່າ ຫລື ສໍາປະທານທີ່ດິນຂອງລັດກ່ອນກໍານົດເວລາຜູ້ເຊົ່າ ຫລື ສໍາປະທານຕ້ອງໄດ້ປົວແປງ ຫລື ບູລະນະທີ່ດິນ ແລະ ສິ່ງແວດລ້ອມໃຫ້ຢູ່ໃນສະພາບເດີມ ແລະ ໃຫ້ສາມາດນໍາໃຊ້ໄດ້ຕາມປົກກະຕິ ຕາມເງື່ອນໄຂຂອງສັນຍາທີ່ໄດ້ຕົກລົງກັນ;
- ປະຕິບັດຕາມລະບຽບການ ແລະ ເງື່ອນໄຂຂອງການເຊົ່າ ຫລື ການສໍາປະທານຢ່າງຄົບຖ້ວນ.

## ໝວດທີ 2
## ການເກັບຄ່າເຊົ່າ ແລະ ຄ່າສໍາປະທານທີ່ດິນຂອງລັດ

ມາດຕາ 40. ການເກັບຄ່າເຊົ່າ ແລະ ສໍາປະທານທີ່ດິນຂອງລັດ

ການເກັບຄ່າເຊົ່າ, ຄ່າສໍາປະທານທີ່ດິນຂອງລັດ ແມ່ນປະຕິບັດຕາມລັດຖະບັນຍັດຂອງປະທານປະເທດວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສໍາປະທານທີ່ດິນຂອງລັດ.

**ມາດຕາ 41. ການປະເມີນຄ່າເຊົ່າ ແລະ ຄ່າສໍາປະທານທີ່ດິນຂອງລັດ**

ການປະເມີນຄ່າເຊົ່າ, ຄ່າສໍາປະທານທີ່ດິນຂອງລັດໃນແຕ່ລະເຂດ ແລະ ແຕ່ປະເພດທີ່ດິນ ແມ່ນມອບໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ ເປັນຜູ້ຮັບຜິດຊອບໃນການຄົ້ນຄວ້າໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ແລ້ວລາຍງານໃຫ້ລັດຖະບານເພື່ອພິຈາລະນາຕົກລົງ.

**ມາດຕາ 42. ການຊໍາລະຄ່າເຊົ່າ ແລະ ຄ່າສໍາປະທານທີ່ດິນຂອງລັດ**

ຄ່າເຊົ່າ ແລະ ຄ່າສໍາປະທານທີ່ດິນໃຫ້ປະຕິບັດດັ່ງນີ້ :

1. ການຊໍາລະຄ່າເຊົ່າໄລຍະສັ້ນ, ໄລຍະກາງ ແລະໄລຍະຍາວ ແມ່ນໃຫ້ຊໍາລະລ່ວງໜ້າກ່ອນ ຕໍ່າສຸດບໍ່ໃຫ້ຫລຸດໜຶ່ງ ປີ ນັບແຕ່ມື້ດໍາເນີນການບໍລິການເປັນຕົ້ນໄປ ສ່ວນປີຕໍ່ໄປ ແມ່ນໃຫ້ຊໍາລະປົກກະຕິ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ.

2. ການຊໍາລະຄ່າສໍາປະທານ ແມ່ນໃຫ້ຊໍາລະລ່ວງໜ້າກ່ອນຕໍ່າສຸດບໍ່ໃຫ້ຫຼຸດ ໜຶ່ງປີ ນັບແຕ່ມື້ດໍາເນີນການບໍລິການ ຫຼື ເກັບຜົນຜະລິດ ເປັນຕົ້ນໄປ ສ່ວນປີຕໍ່ໄປແມ່ນໃຫ້ຊໍາລະປົກກະຕິຕາມທີ່ໄດ້ກໍານົດໄວ້ໃນສັນຍາ. ຍົກເວັ້ນຄ່າສໍາປະທານທີ່ດິນເພື່ອກິດຈະການແຮ່ທາດ ແມ່ນໃຫ້ເກັບຄ່າສໍາປະທານ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 31 ຂອງດໍາລັດສະບັບນີ້ .

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ເປັນຜູ້ເກັບຄ່າເຊົ່າ ແລະ ຄ່າສໍາປະທານທີ່ດິນຂອງລັດ ແລ້ວນໍາໄປມອບເຂົ້າຄັງເງິນແຫ່ງຊາດ ຕາມກົດໝາຍວ່າດ້ວຍງົບປະມານ ແຫ່ງລັດ ແລະ ດໍາລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ. ຫ້າມເດັດຂາດບໍ່ໃຫ້ນໍາເອົາເງິນຄ່າເຊົ່າ ແລະ ຄ່າສໍາປະທານດັ່ງກ່າວໄປໃຊ້ຈ່າຍໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ.

ສ່ວນການເກັບຄ່າເຊົ່າສິ່ງປຸກສ້າງຂອງລັດ ທີ່ຕັ້ງຢູ່ກັບທີ່ດິນນັ້ນ ແມ່ນມອບໃຫ້ຂະແໜງການເງິນເປັນຜູ້ອອກລະບຽບການໃນການເກັບຕ່າງຫາກ ແລະ ເປັນຜູ້ຮັບຜິດຊອບໃນການເກັບຄ່າເຊົ່າສິ່ງປຸກສ້າງ.

## ໝວດທີ 3
## ການທົດແທນຄ່າເສຍຫາຍທີ່ດິນທີ່ໃຫ້ເຊົ່າ ແລະ ໃຫ້ສໍາປະທານ

**ມາດຕາ 43. ການຄິດໄລ່ໃນການທົດແທນທີ່ດິນຂອງປະຊາຊົນ ທີ່ຖືກເຂດເຊົ່າ ແລະ ສໍາປະທານ**

ໃນກໍລະນີເຂດເຊົ່າ ແລະ ສໍາປະທານທີ່ດິນຂອງລັດ ຫາກໄປກວມເອົາທີ່ດິນຂອງປະຊາຊົນ ທີ່ໄດ້ຮັບສິດນໍາໃຊ້ທີ່ດິນຖືກຕ້ອງຕາມກົດໝາຍ ແລະ ຕາມດໍາລັດສະບັບເລກທີ 192/ນຍ, ລົງວັນທີ 07 ກໍລະກົດ 2005 ການຄິດໄລ່ການທົດແທນໃຫ້ປະຕິບັດຕາມແຕ່ລະກໍລະນີດັ່ງນີ້ :

- ທີ່ດິນກະສິກຳສຳລັບປູກເຂົ້າ ຫລື ພືດລົ້ມລຸກ ໃນດ້ານຫລັກການ ແມ່ນຕ້ອງຮັກສາໄວ້ໃຫ້ຊາວກະສິກອນເປັນຜູ້ນຳໃຊ້; ເວັ້ນເສຍແຕ່ໃນກໍລະນີຈຳເປັນ ແມ່ນຕ້ອງໄດ້ທົດແທນໃຫ້ເຂົາເຈົ້າໂດຍເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າປະເມີນຂອງຜົນລະປູກໃນປີປົກກະຕິ ຊູນສິບ

- ທີ່ດິນກະສິກຳສຳລັບປູກຕົ້ນໄມ້ໃຫ້ໝາກ ແມ່ນໃຫ້ເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າປະເມີນຂອງຜົນລະປູກໃນປີປົກກະຕິຊູນ ສິບ.

- ທີ່ດິນສຳລັບປູກໄມ້ອຸດສາຫະກຳ ແລະ ຕົ້ນໄມ້ເປັນຢາ ແມ່ນໃຫ້ເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າປະເມີນຂອງຕົ້ນໄມ້ທີ່ປູກໄວ້ໃນທີ່ດິນຕອນນັ້ນ.

- ທີ່ດິນກະສິກຳສຳລັບລ້ຽງສັດ ແມ່ນໃຫ້ເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າປະເມີນຂອງຜົນໄດ້ຮັບຈາກການລ້ຽງສັດໃນປີປົກກະຕິຊູນ ສາມ.

ສຳລັບທີ່ດິນເນື້ອທີ່ດິນນາ ແມ່ນຫ້າມບໍ່ໃຫ້ໃຊ້ເຂົ້າໃນເປົ້າໝາຍອື່ນໆໃນກໍລະນີມີຄວາມຈຳເປັນຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ດິນ ແລະ ຂະແໜງກະສິກຳ ແລະ ປ່າໄມ້.

ສຳລັບທີ່ດິນປຸກສ້າງແມ່ນໃຫ້ເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າສິ່ງປຸກສ້າງ ແລະ ຜົນລະປູກທີ່ໄດ້ປູກໄວ້ໃນທີ່ດິນຕອນນັ້ນ.

ໃນກໍລະນີມີຄວາມຈຳເປັນຕ້ອງການນຳໃຊ້ທີ່ດິນ ໃນເຂດທີ່ໄດ້ອະນຸມັດໃຫ້ເຊົ່າ ແລະ ສຳປະທານໄປແລ້ວນັ້ນ ເພື່ອນຳໃຊ້ເຂົ້າໃນສາທາລະນະປະໂຫຍດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ລັດຈະທົດແທນຄ່າເສັຍຫາຍຄືນຕໍ່ຊັບສິນທີ່ຕິດພັນກັບທີ່ດິນ ທີ່ໄດ້ເຊົ່າ ຫລື ສຳປະທານນັ້ນໃຫ້ແກ່ຜູ້ລົງທຶນຕາມຄວາມເໝາະສົມ.

ໃນການປະເມີນມູນຄ່າທົດແທນຕ້ອງມີການເຂົ້າຮ່ວມຂອງຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ນາຍບ້ານ ແລະ ປະຊາຊົນທີ່ກ່ຽວຂ້ອງທຸກຄັ້ງ ໂດຍໃຫ້ເຮັດບົດບັນທຶກການປະເມີນໄວ້ເປັນລາຍອັກສອນແລ້ວໃຫ້ຜູ້ເຂົ້າຮ່ວມເຊັນທຸກຄັ້ງ.

## ພາກທີ V
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ .44. ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນຂອງລັດ

ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບການຈັດສັນແບ່ງເຂດ, ການກຳນົດໄລຍະເວລາ, ການກຳນົດອັດຕາຄ່າເຊົ່າ, ຄ່າສຳປະທານ, ການປະເມີນການທົດແທນຄືນທີ່ດິນຂອງລັດ ແມ່ນມອບໃຫ້ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ສົມທົບກັບອົງການປົກຄອງທ້ອງຖິ່ນ,

ຂະແໜງການທີ່ກ່ຽວຂ້ອງ ແລະ ຄູ່ກໍລະນີໃນພື້ນທີ່ດິນທີ່ເກີດການຂັດແຍ່ງຕັ້ງຢູ່ໄກ່ເກ່ຍກັນກ່ອນ, ປະນີປະນອມ ຫລື ພິຈາລະນແກ້ໄຂໃຫ້ສອດຄ່ອງກັບລະບຽບກົດໝາຍ.

ສໍາລັບຂໍ້ຂັດແຍ່ງກ່ຽວກັບກໍລະນີ ການຈັດຕັ້ງປະຕິບັດສັນຍາສໍາປະທານທີ່ດິນຂອງລັດ ນັ້ນມີແຕ່ອົງການຈັດຕັ້ງຂອງລັດ ຫລື ໜ່ວຍງານຂອງລັດ ທີ່ໄດ້ຮັບມອບໝາຍໃຫ້ເປັນຄູ່ສັນຍາ ເທົ່ານັ້ນ ເປັນຜູ້ໄກ່ເກ່ຍ, ປະນີປະນອມ ແລະ ພິຈາລະນາແກ້ໄຂໃຫ້ເປັນຂັ້ນເດັດຂາດ.

**ມາດຕາ 45. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະທາງແພ່ງ**

ການແກ້ໄຂຂໍ້ຂັດແຍ່ງ ທີ່ມີລັກສະນະທາງແພ່ງກ່ຽວກັບການມອບໂອນ, ການສືບທອດມູນມໍລະດົກ, ສັນຍາເຊົ່າ ຫລື ສັນຍາສໍາປະທານທີ່ດິນຂອງລັດ ແມ່ນໃຫ້ອົງການຄຸ້ມຄອງທີ່ດິນກັບຄູ່ກໍລະນີໄກ່ເກ່ຍກັນກ່ອນ. ຖ້າການໄກ່ເກ່ຍຫາກບໍ່ສາມາດຕົກລົງກັນໄດ້, ຄູ່ກໍລະນີສາມາດສະເໜີຫາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເປັນຜູ້ໄກ່ເກ່ຍ ຫລື ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອດໍາເນີນຄະດີຕາມຂະບວນການຍຸຕິທໍາ.

**ມາດຕາ 46. ການແກ້ໄຂຂໍ້ຂັດແຍ່ງທີ່ດິນທີ່ພົວພັນກັບຕ່າງປະເທດ**

ການແກ້ໄຂຂໍ້ຂັດແຍ່ງທີ່ດິນທີ່ພົວພັນກັບຕ່າງປະເທດ ກ່ຽວກັບການເຊົ່າທີ່ດິນຂອງລັດສໍາລັບສໍານັກງານ, ທີ່ຢູ່ອາໄສຂອງສະຖານເອກອັກຄະລັດຖະທູດ, ສະຖານກົງສູນ ຫລື ອົງການຈັດຕັ້ງສາກົນໃດໜຶ່ງຕ້ອງແກ້ໄຂດ້ວຍວິທີການປຶກສາຫາລືກັນບົນພື້ນຖານສັນຍາເຊົ່າທີ່ດິນຂອງລັດ, ສັນຍາແລກປ່ຽນສິດໃຊ້ທີ່ດິນ ໂດຍໃຫ້ສອດຄ່ອງກັບກົດໝາຍພາຍໃນຂອງ ສປປ ລາວ ແລະ ຫລັກການຂອງກົດໝາຍສາກົນ ຫລື ສັນຍາສາກົນທີ່ ສປປ ລາວ ເປັນຄູ່ສັນຍາ ຫລື ເປັນພາຄີ.

## ພາກທີ VI
## ການຄຸ້ມຄອງ ແລະ ຕິດຕາມກວດກາການເຊົ່າ ຫລື ການສໍາປະທານທີ່ດິນຂອງລັດ

**ມາດຕາ 47. ການຄຸ້ມຄອງ ແລະ ການຕິດຕາມກວດກາ**

ມອບໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດເປັນຜູ້ຄຸ້ມຄອງ ແລະ ຕິດຕາມກວດກາການເຊົ່າ ແລະ ການສໍາປະທານທີ່ດິນຂອງລັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ແລະ 78 ຂອງກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງ.

ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ແລະ ອົງການຄຸ້ມຄອງທີ່ດິນປະຈຳເມືອງ, ເທດສະບານ ມີໜ້າທີ່ໃນການຄຸ້ມຄອງ ແລະ ຕິດຕາມກວດກາການເຊົ່າ ແລະ ການສຳປະທານທີ່ດິນຂອງລັດ ຕາມການມອບໝາຍຂອງອົງການຄຸ້ມຄອງທີ່ດິນແຫ່ງຊາດ.

**ມາດຕາ 48. ການກວດກາຄືນເນື້ອໃນສັນຍາເຊົ່າ ຫລື ສຳປະທານທີ່ດິນຂອງລັດ**

ສັນຍາໃຫ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດກໍລະນີໃດ ຫາກຂັດກັບບົດບັນຍັດຂອງດຳລັດສະບັບນີ້ ຫລື ລະບຽບກົດໝາຍທີ່ກ່ຽວຂ້ອງນັ້ນ ໃຫ້ອົງການຄຸ້ມຄອງທີ່ດິນ ເຊີນຄູ່ສັນຍາມາເຈລະຈາ ແລະ ປັບປຸງແກ້ໄຂເນື້ອໃນສັນຍາຄືນໃໝ່ ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ດຳລັດສະບັບນີ້.

ໃນກໍລະນີມີຜົນກະທົບທີ່ຮ້າຍແຮງຕໍ່ຜົນປະໂຫຍດຂອງລັດ ຫລື ສັງຄົມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂໍ້ 2 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແມ່ນໃຫ້ຖືວ່າສັນຍານັ້ນເປັນໂມຄະເດັດຂາດໂດຍໃຫ້ຍົກເລີກສັນຍາ ແລະ ປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຫລື ໃຫ້ດຳເນີນຕາມຂັ້ນຕອນຂອງຂະບວນການຍຸຕິທຳ.

**ມາດຕາ 49. ການຍົກເລີກສັນຍາເຊົ່າ ຫລື ສຳປະທານທີ່ດິນຂອງລັດ**

ໃນກໍລະນີຜູ້ເຊົ່າ ຫລື ຜູ້ໄດ້ຮັບສຳປະທານທີ່ດິນຂອງລັດ ຫາກລະເມີດລະບຽບກົດໝາຍ ຫລື ຂໍ້ກຳນົດຂອງດຳລັດສະບັບນີ້ເຊັ່ນ : ນຳໃຊ້ທີ່ດິນບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ຂອບເຂດຂອງການນຳໃຊ້, ບໍ່ຈ່າຍຄ່າເຊົ່າ, ຄ່າສຳປະທານ ແລະ ເງື່ອນໄຂອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ແມ່ນສັນຍານັ້ນຈະຖືກຍົກເລີກ ຫລື ໃນກໍລະນີທີ່ໄດ້ກໍ່ຄວາມເສັຍຫາຍຕໍ່ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ຫລື ສັງຄົມ ຜູ້ເຊົ່າ ຫລື ຜູ້ສຳປະທານ ຍັງຕ້ອງໄດ້ຮັບຜິດຊອບຄ່າເສັຍຫາຍທັງໝົດໃຫ້ແກ່ລັດຕາມລະບຽບກົດໝາຍຂອງ ສປປ ລາວ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 50. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງທີ່ໄດ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດ ທີ່ໄດ້ປະຕິບັດຖືກຕ້ອງຕາມເງື່ອນໄຂຂອງສັນຍາທີ່ໄດ້ເຊັນກັນ, ຖືກຕ້ອງຕາມກົດໝາຍ ແລະ ດຳລັດສະບັບນີ້ຈະໄດ້ຮັບຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 51. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງທີ່ເຊົ່າ ຫລື ສຳປະທານທີ່ດິນຂອງລັດ ຫາກໄດ້ລະເມີດສັນຍາທີ່ໄດ້ເຊັນກັນ ຫລື ລະເມີດລະບຽບກົດໝາຍ ຫລື ຂໍ້ກຳນົດຂອງດຳລັດສະບັບນີ້ຈະຖືກແຈ້ງເຕືອນຢ່າງເປັນລາຍລັກອັກສອນ ເພື່ອໃຫ້ປະຕິບັດ ຫລື ໃຫ້ແກ້ໄຂ. ຖ້າຫາກບໍ່ປະຕິບັດ ຫລື ບໍ່ແກ້ໄຂຕາມການແຈ້ງຂອງພາກສ່ວນທີ່ກ່ຽວຂ້ອງພາຍໃນ 30 ວັນນັບແຕ່ມື້ໄດ້ຮັບແຈ້ງການເປັນຕົ້ນໄປ ແມ່ນຈະຖືກຍົກເລີກສັນຍາ ແລະ ໃຫ້ໃຊ້ແທນຄ່າເສັຍຫາຍຕາມຕົວຈິງທີ່ເກີດຂຶ້ນ.

ໃນກໍລະນີມີການນຳໃຊ້ທີ່ດິນທີ່ໃຫ້ເຊົ່າ ຫລື ການສຳປະທານທີ່ດິນຂອງລັດນັ້ນ ຫາກບໍ່ຖືກຕ້ອງຕາມເປົ້າໝາຍ ຫລື ເງື່ອນໄຂຂອງສັນຍາ ຫລື ເປັນການກະທຳຜິດທາງອາຍາ, ນອກຈາກຖືກຍົກເລີກສັນຍາ ແລະ ໃຊ້ແທນຄ່າເສັຍຫາຍແລ້ວ ຍັງຈະຖືກດຳເນີນຄະດີອາຍາໃນສະຖານໜັກ ຫລື ເບົາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 52. ການຈັດຕັ້ງປະຕິບັດ**

ອົງການຄຸ້ມຄອງທີ່ດິນແຫ່ງຊາດ, ກະຊວງການເງິນ, ບັນດາກະຊວງ ແລະອົງການທຽບເທົ່າກະຊວງ, ອົງການປົກຄອງແຂວງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມອບໃຫ້ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ອອກຄຳແນະນຳຈັດຕັ້ງປະຕິບັດດຳລັດສະບັບນີ້ ເພື່ອໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 53. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ